ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມລ້ຽງສັດ ແລະ ການປະມົງ

ເລກທີ:1944/ກລປ
ນະຄອນຫຼວງວຽງຈັນ, ວັນທີ 27 JUL 2018

# ແຈ້ງການ

ເຖິງ: ຂະແໜງລ້ຽງສັດ ແລະ ການປະມົງແຂວງ, ນະຄອນຫຼວງ

**ເລື່ອງ: ແຈ້ງການນຳໃຊ້ແບບພິມ ສຳລັບ ການຂໍນຳເຂົ້າ - ສົ່ງອອກ - ຂົນສົ່ງຜ່ານ ແລະ ການກວດກາຫຼັງການນຳເຂົ້າ ສັດ, ສັດນ້ຳ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ**

- ອີງຕາມກົດໝາຍ ວ່າດ້ວຍ ການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມກົດໝາຍ ວ່າດ້ວຍການປະມົງ ສະບັບເລກທີ 03/ສພຊ, ລົງວັນທີ 09 ກໍລະກົດ 2009;
- ອີງຕາມຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 3824/ກປ, ລົງວັນທີ 18 ສິງຫາ 2017;
- ອີງຕາມບົດບັນທຶກກອງປະຊຸມຜ່ານຮ່າງແບບພິມ ກ່ຽວກັບຂັ້ນຕອນ ການຂໍນຳເຂົ້າ - ສົ່ງອອກ - ຂົນສົ່ງຜ່ານ ແລະ ການກວດກາຫຼັງການນຳເຂົ້າ ສັດ, ສັດນ້ຳ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ ຄັ້ງວັນທີ 19 ມິຖຸນາ 2018.

ເພື່ອ ເປັນການຜັນຂະຫຍາຍ ແລະ ການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍ ການລ້ຽງສັດ ແລະ ການສັດຕະວະແພດ, ກົດໝາຍ ວ່າດ້ວຍ ການປະມົງ ແລະ ບັນດາ ນິຕິກຳລຸ່ມກົດໝາຍທີ່ກ່ຽວຂ້ອງ ໃຫ້ເປັນເອກະພາບກັນ ທັງສອດຄ່ອງຕາມເງື່ອນໄຂ ສະພາບຄວາມເປັນຈິງ ໂດຍສາມາດເຊື່ອມສານກັບກົດໝາຍ, ລະບຽບການອື່ນທີ່ກ່ຽວຂ້ອງລວມທັງລະບຽບການພາຍໃນ ແລະ ລະບຽບການສາກົນທີ່ ສປປ ລາວ ເປັນພາຄີ ໂດຍສະເພາະ ລະບຽບຂັ້ນຕອນ ການນຳເຂົ້າ, ສົ່ງອອກ ແລະ ຂົນສົ່ງຜ່ານ ສັດ, ສັດນ້ຳ ແລະ ຜະລິດຕະພັນສັດ ແລະ ການປະມົງ ໃຫ້ມີຄວາມສະດວກ ວ່ອງໄວ, ໂປ່ງໃສ ແລະ ສາມາດກວດສອບໄດ້.

ການນຳໃຊ້ ແບບພິມ ກ່ຽວກັບ ການຂໍ, ການອະນຸຍາດ ນຳເຂົ້າ - ສົ່ງອອກ - ຂົນສົ່ງຜ່ານ ແລະ ການກວດກາກ່ອນ ແລະ ຫຼັງການນຳເຂົ້າ ສັດ, ສັດນ້ຳ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ ກໍແມ່ນວິທີການນຶ່ງ ທີ່ຈະເປັນການອຳນວຍຄວາມສະດວກໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ແລະ ປະຊາຊົນທົ່ວໄປ ທີ່ ປະກອບທຸລະກິດ ນຳເຂົ້າ, ສົ່ງອອກ ແລະ ຂົນສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ ຊຶ່ງຈາກການຈັດຕັ້ງປະຕິບັດ ລະບຽບ ຂັ້ນຕອນດັ່ງກ່າວ ຈະເຮັດໃຫ້ເກີດຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈ ແກ່ພາກລັດ ເວົ້າລວມ ເວົ້າສະເພາະແມ່ນຂະແໜງການລ້ຽງສັດ ແລະ ການປະມົງ ທັງຈະໄດ້ຮັບຄວາມຮ່ວມໄມ້ຮ່ວມມື ຈາກພາກສ່ວນທີ່ກ່ຽວຂ້ອງຕ່າງໆໃນການຈັດຕັ້ງ ປະຕິບັດເປັນຢ່າງດີ ດັ່ງນັ້ນ:

ກົມລ້ຽງສັດ ແລະ ການປະມົງ ອອກແຈ້ງການ ດັ່ງນີ້:

1. ອະນຸມັດ ໃຫ້ນໍາໃຊ້ແບບພິມ ທີ່ມີທັງໝົດ 10 ແບບພິມ ຊຶ່ງປະກອບດ້ວຍ:
   1. ແບບພິມ ຂອຜ 1/Form IET 1 - ໃບຄໍາຮ້ອງຂໍນໍາເຂົ້າ/ສົ່ງອອກ/ສົ່ງຜ່ານ/ນໍາເຂົ້າເພື່ອສົ່ງອອກ ສັດ, ສັດນໍ້າ , ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ ;
   2. ແບບພິມ ຂອຜ 2/Form IET 2 - ບົດບັນທຶກ ການກວດກາດ້ານວິຊາການ ກ່ຽວກັບ ການຂໍນໍາເຂົ້າ ສັດ, ສັດນໍ້າ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ ກ່ອນການນໍາເຂົ້າ ;
   3. ແບບພິມ ຂອຜ 3/Form IET 3 - ບົດລາຍງານ ;
   4. ແບບພິມ ຂອຜ 4/Form IET 4 - ໃບຢັ້ງຢືນການກວດກາເອກະສານ ;
   5. ແບບພິມ ຂອຜ 5/Form IET 5 - ໃບແຈ້ງອະນຸມັດ/NOTIFICATION LETTER ;
   6. ແບບພິມ ຂອຜ 6/Form IET 6 - ໃບຢັ້ງຢືນການກວດກາເອກະສານ/Document Inspection Certification ;
   7. ແບບພິມ ຂອຜ 7/Form IET7 - ໃບຢັ້ງຢືນການກວດກາ/Inspection Certification ;
   8. ແບບພິມ ຂອຜ 8/Form IET 8 - ບົດບັນທຶກ ການຕິດຕາມກວດກາການເຄື່ອນຍ້າຍ ສັດ, ສັດນໍ້າ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ ຫຼັງການນໍາເຂົ້າ ;
   9. ແບບພິມ ຂອຜ 9/Form IET9 - ບົດບັນທຶກການລົງຕິດຕາມກວດກາສຸຂະພາບສັດ ສັດນໍ້າ ໄລຍະກັກກັນ;
   10. ແບບພິມ ຂອຜ 10/Form IET10 - ໃບຢັ້ງຢືນສຸຂະພາບສັດ ຫຼື ສັດນໍ້າ (ໄລຍະກັກກັນ.......ວັນ).

2. ໃຫ້ນໍາໃຊ້ ຂັ້ນຕອນການນໍາເຂົ້າ ສັດ, ສັດນໍ້າ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ ເຂົ້າ ສປປ ລາວ ຕາມແຜນວາດ 1 ທີ່ຄັດຕິດມາພ້ອມນີ້ ພ້ອມດຽວກັນກໍຕ້ອງພິມເຜີຍແຜ່ ແລະ ທໍາຄວາມເຂົ້າໃຈ ໃຫ້ຜູ້ປະກອບການ ແລະ ຜູ້ມີຈຸດປະສົງ ນໍາເຂົ້າ ສັດ, ສັດນໍ້າ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ, ສັດນໍ້າ ແລະ ການປະມົງ ສາມາດເຂົ້າໃຈ ແລະ ປະຕິບັດຕາມ ຢ່າງກວ້າງຂວາງ ;
3. ໃຫ້ພະແນກການກ່ຽວຂ້ອງຂອງກົມ ສົມທົບກັບ ຂະແໜງລ້ຽງສັດ ແລະ ການປະມົງ ນະຄອນຫຼວງ/ແຂວງ ເພື່ອຈັດຕັ້ງໂຄສະນາເຜີຍແຜ່ ບັນດານິຕິກໍາຕ່າງໆ ຂອງຂະແໜງ ການລ້ຽງສັດ ແລະ ການປະມົງ ລວມທັງແບບພິມທີ່ກ່ຽວຂ້ອງ ໃນແຈ້ງການສະບັບນີ້ ໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍສະເພາະ ຜູ້ດໍາເນີນທຸລະກິດກ່ຽວກັບການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ຫຼື ຜູ້ເຮັດການນໍາເຂົ້າ, ສົ່ງອອກ, ຂົນສົ່ງຜ່ານ ສັດ, ສັດນໍ້າ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ, ສັດນໍ້າ ແລະ ການປະມົງ ໃຫ້ຮັບຮູ້ ແລະ ເຂົ້າໃຈ ຢ່າງທົ່ວເຖິງ ພ້ອມກັນຈັດຕັ້ງປະຕິບັດ ຢ່າງໄດ້ຮັບຜົນດີ ແລະ ມີຄວາມເປັນເອກະພາບສູງ ;
4. ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ນະຄອນຫຼວງ/ແຂວງ ລົງສົມທົບ ນໍາພາໜ່ວຍງານດ່ານກວດກາສັດຕະວະແພດສາກົນ ນະຄອນຫຼວງ/ແຂວງ, ໜ່ວຍງານລ້ຽງສັດ-ການປະມົງປະຈໍາເມືອງ ຈັດຕັ້ງປະຕິບັດ ແລະ ນໍາໃຊ້ແບບພິມ ທີ່ກໍານົດໃນແຈ້ງການສະບັບນີ້ ໂດຍການລົງສົມທົບກັບ ຫ້ອງການກະສິກໍາ - ປ່າໄມ້ປະຈໍາເມືອງ ແລະ ອົງການປົກຄອງຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງ ;

5. ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ນະຄອນຫຼວງ/ແຂວງ ພາຍຫຼັງຈັດຕັ້ງປະຕິບັດ ໃນໄລຍະນຶ່ງແລ້ວ ໃຫ້ສະຫຼຸບ ລາຍງານຜົນໄດ້ຮັບ, ຈຸດດີ, ຈຸດອ່ອນ ແລະ ບົດຮຽນທີ່ຖອດຖອນໄດ້ ໃຫ້ພະແນກກະສິກຳ-ປ່າໄມ້ ນະຄອນຫຼວງ/ແຂວງ ແລະ ກົມລ້ຽງສັດ-ການປະມົງ, ກະຊວງກະສິກຳ-ປ່າໄມ້ ຊາບເພື່ອມີວິທີປັບປຸງ ຫຼື ເສີມຂະຫຍາຍ ການຈັດຕັ້ງປະຕິບັດໃຫ້ໄດ້ດີຂຶ້ນຕື່ມອີກ;
6. ສຳລັບ ຄ່າທຳນຽມ ແລະ ຄ່າບໍລິການວິຊາການ ທີ່ຕິດພັນກັບການ ຈັດຕັ້ງປະຕິບັດແຈ້ງການນີ້ ແມ່ນໃຫ້ປະຕິບັດຕາມລັດຖະບັນຍັດ ຂອງປະທານປະເທດ ແຫ່ງ ສປປ ລາວ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ພາກທີ II ໝວດທີ VIII ມາດຕາທີ 42 ຄ່າບໍລິການຂອງຂະແໜງການກະສິກຳ ແລະ ປ່າໄມ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າ ກົມລ້ຽງສັດ ແລະ ການປະມົງ**

ສິນພັນ ຈັນເພັງ

**ສຳເນົາສົ່ງ:**

| | | |
|---|---|---|
| – ຫ້ອງການກະຊວງກະສິກຳ-ປ່າໄມ້ | 1 ສະບັບ | ເພື່ອໃຊ້ຕາງລາຍງານ |
| – ພະແນກກະສິກຳ-ປ່າໄມ້ ນະຄອນຫຼວງ/ແຂວງ | 1 ສະບັບ | ເພື່ອໃຊ້ຕາງລາຍງານ |
| – ຫ້ອງການກະສິກຳ-ປ່ໄມ້ ປະຈຳເມືອງ | 1 ສະບັບ | ເພື່ອຈັດຕັ້ງປະຕິບັດ |
| – ພະແນກສັດຕະວະແພດ ກົມລ້ຽງສັດ-ການປະມົງ | 1 ສະບັບ | ເພື່ອຈັດຕັ້ງປະຕິບັດ |
| – ພະແນກລະບຽບການ ກົມລ້ຽງສັດ-ການປະມົງ | 1 ສະບັບ | ເພື່ອຈັດຕັ້ງປະຕິບັດ |
| – ພະແນກການປະມົງ ກົມລ້ຽງສັດ-ການປະມົງ | 1 ສະບັບ | ເພື່ອຈັດຕັ້ງປະຕິບັດ |
| – ພະແນກຄຸ້ມຄອງການລ້ຽງສັດ ກົມລ້ຽງສັດ-ການປະມົງ | 1 ສະບັບ | ເພື່ອຈັດຕັ້ງປະຕິບັດ |
| – ຂະແໜງລ້ຽງສັດ ແລະ ການປະມົງແຂວງ/ນະຄອນຫຼວງ | 1 ສະບັບ | ເພື່ອຈັດຕັ້ງປະຕິບັດ |
| – ດ່ານກວດກາສັດຕະວະແພດສາກົນ ນະຄອນຫຼວງ/ແຂວງ | 1 ສະບັບ | ເພື່ອຈັດຕັ້ງປະຕິບັດ |
| – ໜ່ວຍງານລ້ຽງສັດ-ການປະມົງ ປະຈຳເມືອງ | 1 ສະບັບ | ເພື່ອຈັດຕັ້ງປະຕິບັດ |
| – ເກັບມ້ຽນ | 1 ສະບັບ | |

ແບບພິມ ຂອຜ 1/Form IET 1

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

Lao People's Democratic Republic

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

Peace Independence Democracy Unity Prosperity

ແຂວງ /Province...................................

ເມືອງ /District..................................

ບ້ານ/Village..................................

ຊື່ບໍລິສັດ/Company's Name:.................................... ເລກທີ/Ref. No:_______________/

ໂທຣ/Tel:……………………………………… ທີ່/At...................................., ວັນທີ/Date: ___________________

ອີເມລ/email: ..........................................................

# ໃບຄຳຮ້ອງຂໍນຳເຂົ້າ/ສົ່ງອອກ/ສົ່ງຜ່ານ/ນຳເຂົ້າເພື່ອສົ່ງອອກ

# ສັດ, ສັດນ້ຳ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ

**APPLICATION FOR IMPORT/EXPORT/IN TRANSIT/ IMPORT FOR RE-EXPORT OF ANIMALS/ AQUATICS/ANIMAL-FISHERIES COMMODITY**

**ຮຽນທ່ານ/TO MR/MS:...............................................**

ເລື່ອງ/Subject: ຄຳຮ້ອງຂໍ ☐ ນຳເຂົ້າ ☐ ສົ່ງອອກ ☐ ຂົນສົ່ງຜ່ານ ☐ ນຳເຂົ້າເພື່ອສົ່ງອອກ

APPLICATION FOR ☐ IMPORT ☐ EXPORT ☐ IN TRANSIT ☐ IMPORT FOR RE-EXPORT

1. ຂ້າພະເຈົ້າ ຊື່/Mr./Ms....................................................ສັນຊາດ/ Nationality..................ອາຊີບ/Profession……………………….

   ຕາງໜ້າໃຫ້ບໍລິສັດ/Name of Company:.................................................ທະບຽນວິສາສະຫະກິດເລກທີ /Business License No .......................

   ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ການລ້ຽງສັດ, ການສັດຕະແພດ ຫຼື ການປະມົງ ເລກທີ/ Livestock, Veterinary or Fisheries Operation Permit No. ……………….ທີ່ຢູ່ຂອງບໍລິສັດ/Address: ໜ່ວຍ/Unit....... ບ້ານ/Village:....................ເມືອງ/District: .................. .................ແຂວງ /Province............................... ປະເທດ/Country: ...............................................ໂທລະສັບ/Telephone ................. ................ອີເມລ/Email...................................ຖືບັດປະຈຳຕົວ/ໜັງສືເດີນທາງ/I.D. No./Passport No..................... ອອກທີ່/ Issued by …......................ໝົດອາຍຸ Expire date......................................

2. ລາຍການສິນຄ້າທີ່ສະເໜີຂໍໃນຄັ້ງນີ້ມີດັ່ງນີ້ /List of requested Goods are as follow:

| ລ/ດ<br>item | ລາຍການສິນຄ້າ<br>Description of goods | ຫົວໜ່ວຍ<br>Unit | ຈຳນວນ<br>Quantity | ນ້ຳໜັກລວມ<br>Gross Weight | ມູນຄ່າລວມ<br>Amount |
|---|---|---|---|---|---|
| 1. | | | | | |
| 2. | | | | | |
| 3. | | | | | |
| 4. | | | | | |
| 5. | | | | | |
| 6. | | | | | |
| 7. | | | | | |
| 8. | | | | | |
| 9. | | | | | |
| 10. | | | | | |

**ໝາຍເຫດ: ຖ້າຫາກ ເກີນກວ່າ 10 ລາຍການ ສະເໜີໃຫ້ສ້າງຕາຕະລາງເພີ່ມຕັດຕິດໃສ່ໃບຄຳຮ້ອງມາພ້ອມ/*Remark: If exceed more than 10 items Please provide more table in additional page.*

3. ຈຸດປະສົງ/Purpose for: ..............................................................................................................................................

4. ສິນຄ້າມີແຫຼ່ງກຳເນີດມາຈາກ /Origin of Goods ..........................................ໜ່ວຍ/Unit.............. ຖະໜົນ/Street ....................ບ້ານ/Village:........................ ເມືອງ/District :............ ແຂວງ/Province...........................ປະເທດ/Country:.................................

5. ຊື່ ແລະ ທີ່ຢູ່ຂອງເຈົ້າຂອງສິນຄ້າ/Owner of the Goods and Address Mr./Ms.................................... ຊື່ບໍລິສັດ/Name of Company: ................................................................. ບ້ານ/Village:...................ເມືອງ/District: .........................ແຂວງ/Province........................... ປະເທດ/Country: ................................ໂທລະສັບ/Contact No....................................ອີເມລ/Email..........................................................

6. ສະຖານທີ່ປາຍທາງບ່ອນສິນຄ້າລົງ/Final destination: ໜ່ວຍ/Unit........ ບ້ານ/Village:...................ເມືອງ/District: ................................ ແຂວງ (Province).................... ປະເທດ/Country: ................. ໂທລະສັບ/Tel No............................ອີເມລ/Email ...................................

7. ນຳເຂົ້າ ຜ່ານດ່ານຂາເຂົ້າ ທີ່/Port of Entry at:...........................................................................................................................

8. ສົ່ງອອກຜ່ານດ່ານຂາອອກ ທີ່/Port of Exit at:..............................................................................................................................

9. ຂົນສົ່ງຜ່ານ ຜ່ານດ່ານຂາເຂົ້າ/In transit consignment through Lao PDR at Port of Entry............................................................................ ຜ່ານດ່ານຂາອອກ/Port of Exit..........................................................................................................................................................

10. ສະຖານທີ່ກັກກັນສຸດທ້າຍ ກ່ອນນຳເຂົ້າ/ສົ່ງອອກ ສປປ ລາວ/Name of Final Quarantine before Entering/Exporting at.......................... ..........................................................................................................................................................................

11. ການນຳເຂົ້າ, ສົ່ງອອກ ໃນວັນທີ ເດືອນ ປີ/Consignment to take place on (dd/mm/yyyy).................................................................

ຂ້າພະເຈົ້າ ຂໍຮັບປະກັນວ່າ ຈະປະຕິບັດ ຕາມກົດໝາຍ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງ ຂອງ ສປປ ລາວ ຢ່າງເຄັ່ງຄັດ/I hereby certify that I will strictly follow every set rules and requirements of the Lao PDR related to the movement of items specified above.

ລາຍເຊັນຜູ້ຮ້ອງຂໍ
Signature of Applicant

**ເອກະສານປະກອບ:** ໃຫ້ໝາຍ ☑ ໃສ່ຫ້ອງຕໍ່ໜ້າເອກະສານ ລຸ່ມນີ້ ທີ່ກ່ຽວຂ້ອງກັບເງື່ອນໄຂຂອງການສະເໜີ/

**Attached Documents: Please tick** ☑ in front of each item below that required for Application:

1) ▢ ສຳເນົາບັດປະຈຳຕົວປະຊາຊົນ ຫຼື ໜັງສືເດີນທາງ /Copy of ID or Passport;
2) ▢ ສຳເນົາ ໃບທະບຽນວິສາຫະກິດ/Copy of Business License;
3) ▢ ໃບຢັ້ງຢືນສຸຂະພາບສັດ (ໃນມື້ນຳສິນຄ້າເຂົ້າຕົວຈິງ)/Animal Health Certificate;
4) ▢ ໃບຢັ້ງຢືນການະພັນສັດ (ກໍລະນີທີ່ນຳມາເປັນແນວພັນ) / Pedigree Certificate in case for breeding
5) ▢ ໃບຢັ້ງຢືນສຸຂານາໄມ ຫຼື ໃບຢັ້ງຢືນຄຸນະພາບ (ໃນມື້ນຳສິນຄ້າເຂົ້າຕົວຈິງ)/ Sanitary Certificate or Quality Certificate;
6) ▢ ໃບຢັ້ງຢືນການກັກກັນ / Certificate of Quarantine station;
7) ▢ ໃບແຈ້ງລາຄາສິນຄ້າ ແລະ ໃບແຈ້ງລາຍການສິນຄ້າ/ Invoice and Packing list;
8) ▢ ໃບແຈ້ງອະນຸຍາດ ຂອງ ປະເທດນຳເຂົ້າ ໃນກໍລະນີ ຂົນສົ່ງຜ່ານ/ Import Notification in case of In Transit through Lao PDR;
9) ▢ ໃບຢັ້ງຢືນ CITES ຖ້າເປັນສັດນ້ຳ-ສັດປ່າຫວງຫ້າມ ຫຼື ຄວບຄຸມຂອງສາກົນ/CITES Certificate;
10) ▢ ໃບມອບສິດຈາກຜູ້ຂໍນຳເຂົ້າ (ຖ້າຫາກໃຫ້ຜູ້ອື່ນມາດຳເນີນການແທນ)/ Power of Attorney in case of submitting document by a representative;
11) ▢ ໃບຢັ້ງຢືນມາດຕະຖານດ້ານເຕັກນິກກ່ຽວກັບ ຟາມ/ໂຮງຂ້າສັດ/ສະຖານທີ່ເກັບຮັກສາ/ບ່ອນຈຳໜ່າຍ ຕາມແຕ່ລະກໍລະນີ/Certificate for GAHP/GMP
12) ▢ ບົດລາຍງານການກວດກາຕົວຈິງຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ ຂັ້ນ ເມືອງ ຫຼື ແຂວງ ໃນກໍລະນີ ທີ່ມີການຮຽກຮ້ອງ/ Report on site Inspection of relevant local authority if required.

**ແບບພິມ ຂອຜ 2/Form IET 2**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ..............................
ເມືອງ..............................
ຫ້ອງການກະສິກຳ ແລະ ປ່າໄມ້
ໜ່ວຍງານລ້ຽງສັດ ແລະ ການປະມົງ ທີ່:.........................., ວັນທີ:....................

## ບົດບັນທຶກ
## ການກວດກາດ້ານວິຊາການ ກ່ຽວກັບ ການຂໍນຳເຂົ້າ ສັດ, ສັດນ້ຳ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ ກ່ອນການນຳເຂົ້າ

- ອີງຕາມກົດໝາຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016 ພາກທີ V ມາດຕາ 70.
- ອີງຕາມດຳລັດຂອງລັດຖະບານ ວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ສະບັບເລກທີ 230/ລບ, ລົງວັນທີ 04 ມິຖຸນາ 2014.
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 2150/ກປ, ລົງວັນທີ 23 ຕຸລາ 2013 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງໜ່ວຍງານລ້ຽງສັດ ແລະ ການປະມົງ ທີ່ຂຶ້ນກັບຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ.

ໃນວັນທີ...............ເວລາ...........ໂມງ ຄະນະກວດກາປະກອບດ້ວຍ:

1. ……………………………………… ຕຳແໜ່ງ.................................................................
2. ……………………………………… ຕຳແໜ່ງ.................................................................
3. ……………………………………..……ຕຳແໜ່ງ.................................................................
4. ……………………………………….ຕຳແໜ່ງ.................................................................

ໄດ້ລົງກວດກາທາງດ້ານວິຊາການ ກ່ຽວກັບການຂໍນຳເຂົ້າ ສັດ, ສັດນ້ຳ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ ຂອງ ☐ຟາມລ້ຽງສັດ ☐ຟາມລ້ຽງສັດນ້ຳ ☐ສາງເຢັນ ☐ສາງອາຫານສັດ ແລະ ☐ອື່ນໆໃຫ້ລະບຸ................. .........................) ຂອງບຸກຄົນ/ການຈັດຕັ້ງ/ຫຼືບໍລິສັດຊື່:...............................ໂດຍມີທີ່ຕັ້ງຢູ່ບ້ານ:...................... ເມືອງ:...................ແຂວງ:......................ເບີໂທລະສັບ:......................ຜ່ານການກວດກາສະຖານທີ່ຕົວຈິງພົບວ່າ:

1. ໃບທະບຽນຟາມ ☐ ມີ ☐ ບໍ່ມີ
2. ໃບຢັ້ງຢືນມາດຕະຖານຟາມ ☐ ມີ ☐ ບໍ່ມີ
3. ໃບທະບຽນສາງເຢັນ ☐ ມີ ☐ ບໍ່ມີ
4. ໃບທະບຽນສາງອາຫານສັດ ☐ ມີ ☐ ບໍ່ມີ
5. ໃບທະບຽນຮ້ານຂາຍອາຫານສັດ ☐ ມີ ☐ ບໍ່ມີ
6. ການອະນາໄມຂ້າເຊື້ອຕາມລະບຽບວິຊາການ ☐ ປະຕິບັດ ☐ ບໍ່ໄດ້ປະຕິບັດ

7. ມີການກະກຽມ ຄອກສັດ ໂດຍມີການປູແກບ/ສິ່ງຮອງພື້ນ ມີຄວາມໜາປະມານ 10-15 ຊັງຕີແມັດ ແລະ ໄດ້ຫວ່ານປູນຂາວຂ້າເຊື້ອ ຕາມອັດຕາສ່ວນທີ່ກໍານົດ ☐ ມີ ☐ ບໍ່ມີ
8. ມີການກະກຽມ ແລະ ຂ້າເຊື້ອ ໜອງ/ອ່າງ ສໍາລັບນໍາເອົາສັດນໍ້າມາລ້ຽງໃໝ່ ຕາມຫຼັກວິຊາການ ☐ ມີ ☐ ບໍ່ມີ
9. ຄອກກັກກັນສັດ (ສໍາລັບພໍ່-ແມ່ພັນ ຫຼື ສັດລ້ຽງນໍາເຂົ້າມາໃໝ່ກ່ອນນໍາເຂົ້າຝູງ) ☐ ມີ ☐ ບໍ່ມີ
10. ອ່າງສໍາລັບພັກສັດນໍ້າ ໃນເວລານໍາເຂົ້າມາລ້ຽງໃໝ່ ແລະ ແຍກສັດນໍ້າເຈັບປ່ວຍ ☐ ມີ ☐ ບໍ່ມີ
11. ຄອກສັດ ຫຼື ອ່າງ ເພື່ອແຍກສັດ ຫຼື ສັດນໍ້າເຈັບປ່ວຍ ☐ ມີ ☐ ບໍ່ມີ
12. ບໍລິເວນອ້ອມຮອບສະຖານທີ່ລ້ຽງສັດໄດ້ອະນາໄມທໍາຄວາມສະອາດ ແລະ ປະຕູທາງເຂົ້າຟາມລ້ຽງສັດໄດ້ມີອ່າງນໍ້າຢາຂ້າເຊື້ອຕາມລະບຽບການ ☐ ປະຕິບັດ ☐ ບໍ່ໄດ້ປະຕິບັດ

**ຄໍາເຫັນທາງດ້ານວິຊາການຂອງຄະນະລົງກວດກາເຫັນວ່າ:**...................................................................

.......................................................................................................................................

.......................................................................................................................................

.......................................................................................................................................

.......................................................................................................................................

.......................................................................................................................................

ດັ່ງນັ້ນ, ຈຶ່ງເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນບ່ອນອີງ.

| | | |
|---|---|---|
| **ໜ່ວຍງານລ້ຽງສັດ/ການປະມົງ ຂລປ** | **ເຈົ້າຂອງ..............** | **ຜູ້ບັນທຶກ** |

**ໜ່ວຍງານລ້ຽງສັດ ແລະ ການປະມົງເມືອງ**

ແບບພິມ ຂອຜ 3/Form IET 3

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ/ແຂວງ..................

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ........................ ເລກທີ:................../ຫກປ........

ວັນທີ...................................

# ບົດລາຍງານ

**ຮຽນ: ທ່ານຫົວໜ້າພະແນກກະສິກຳ ແລະ ປ່າໄມ້ນະຄອນຫຼວງ/ແຂວງ................................**

**ເລື່ອງ: ລາຍງານ ກ່ຽວກັບ ການກວດກາກ່ອນການນຳເຂົ້າ................................................**

– ອີງຕາມບົດບັນທຶກການກວດກາດ້ານວິຊາການກ່ອນການຂໍນຳເຂົ້າ ສັດ, ສັດນ້ຳ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ ຂອງຄະນະກຳມະການກວດກາ, ໜ່ວຍງານລ້ຽງສັດ ແລະ ການປະມົງເມືອງຄັ້ງວັນທີ:.............

ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ................................ຂໍຖືເປັນກຽດຮຽນມາຍັງທ່ານຊາບວ່າ: ໃນວັນທີ .........................ຄະນະກຳມະການໄດ້ລົງກວດກາ ກ່ອນນຳເຂົ້າຂອງບຸກຄົນ/ການຈັດຕັ້ງ/ຫຼືບໍລິສັດ ຊື່:...................... ທີ່ຕັ້ງຢູ່ບ້ານ:......................ເມືອງ:.......................ແຂວງ:..........................ເບີໂທລະສັບ...........................

ຜ່ານການລົງກວດກາຂອງຄະນະດັ່ງກ່າວເຫັນວ່າ:..................................................................................... ....................................................................................................................................................... ..................................................................................ໂດຍມີບົດບັນທຶກການກວດກາຄັດຕິດມາພ້ອມນີ້.

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານເພື່ອຊາບ ແລະ ຊີ້ນຳໃຫ້ຂະແໜງລ້ຽງສັດ - ການປະມົງ ນະຄອນຫຼວງ/ແຂວງ ດຳເນີນການ ໃຫ້ແກ່ຜູ້ກ່ຽວ ຕາມຂັ້ນຕອນ ແລະ ລະບຽບການດ້ວຍ.

ຮຽນມາດ້ວຍຄວາມນັບຖື

**ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ**

**ແບບພິມ ຂອຜ 4/Form IET 4**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້
ພະແນກກະສິກຳ ແລະ ປ່າໄມ້ນະຄອນຫຼວງ/ແຂວງ..................
ຂະແໜງລ້ຽງສັດ ແລະ ການປະມົງ ເລກທີ................/...........
ທີ່..................., ວັນທີ:.......................

# ໃບຢັ້ງຢືນການກວດກາເອກະສານ

**ຮຽນ: ທ່ານ ຫົວໜ້າກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້.**
**(ໂດຍຜ່ານພະແນກ ກະສິກຳ ແລະ ປ່າໄມ້ນະຄອນຫຼວງ/ແຂວງ....................................)**
**ເລື່ອງ: ການຢັ້ງຢືນການກວດກາເອກະສານ ກ່ຽວກັບການ: ☐ ນຳເຂົ້າ ☐ ສົ່ງອອກ ☐ ຂົນສົ່ງຜ່ານ ☐ ນຳເຂົ້າເພື່ອສົ່ງອອກ.**

**ຂະແໜງລ້ຽງສັດ ແລະ ການປະມົງ ຂໍຢັ້ງຢືນວ່າ ໄດ້ກວດກາເອກະສານ ດັ່ງລຸ່ມນີ້:**

1) ☐ ສຳເນົາບັດປະຈຳຕົວປະຊາຊົນ ຫຼື ໜັງສືເດີນທາງ /Copy of ID or Passport;
2) ☐ ສຳເນົາ ໃບທະບຽນວິສາຫະກິດ /Copy of Business License;
3) ☐ ໃບຢັ້ງຢືນສຸຂະພາບສັດ (ໃນມື້ນຳສິນຄ້າເຂົ້າຕົວຈິງ) /Animal Health Certificate;
4) ☐ ໃບຢັ້ງຢືນກຳມະພັນສັດ (ກໍລະນີທີ່ນຳມາເປັນແນວພັນ) /Pedigree Certificate in case for breeding
5) ☐ ໃບຢັ້ງຢືນສຸຂານາໄມຫຼືໃບຢັ້ງຢືນຄຸນະພາບ (ໃນມື້ນຳສິນຄ້າເຂົ້າຕົວຈິງ) /Sanitary Certificate or Quality Certificate;
6) ☐ ໃບຢັ້ງຢືນການກັກກັນ /Certificate of Quarantine station;
7) ☐ ໃບແຈ້ງລາຄາສິນຄ້າ ແລະ ໃບແຈ້ງລາຍການສິນຄ້າ /Invoice and Packing list;
8) ☐ ໃບແຈ້ງອະນຸຍາດ ຂອງປະເທດນຳເຂົ້າໃນກໍລະນີຂົນສົ່ງຜ່ານ /Import Notification in case of In Transit through Lao PDR;
9) ☐ ໃບຢັ້ງຢືນ CITES ຖ້າເປັນສັດນ້ຳ-ສັດປ່າຫວງຫ້າມ ຫຼື ຄວບຄຸມຂອງສາກົນ /CITES Certificate;
10) ☐ ໃບມອບສິດຈາກຜູ້ຂໍນຳເຂົ້າ (ຖ້າຫາກໃຫ້ຜູ້ອື່ນມາດຳເນີນການແທນ) /Power of Attorney in case of submitting document by a representative;
11) ☐ ໃບຢັ້ງຢືນມາດຕະຖານດ້ານເຕັກນິກກ່ຽວກັບຟາມ/ໂຮງຂ້າສັດ/ສະຖານທີ່ເກັບຮັກສາ/ບ່ອນຈຳໜ່າຍຕາມແຕ່ລະກໍລະນີ /Certificate for GAHP/GMP
12) ☐ ບົດລາຍງານການກວດກາຕົວຈິງຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ ຂັ້ນເມືອງ ຫຼື ແຂວງ ໃນກໍລະນີ ທີ່ມີການຮຽກຮ້ອງ/ Report onsite inspection of relevant local authority if required.

ຜ່ານການກວດກາເຫັນວ່າຖືກຕ້ອງ ແລະ ສະເໜີ ໃຫ້ກົມລ້ຽງສັດ ແລະ ການປະມົງ ພິຈາລະນາດ້ວຍ.
ຮຽນມາດ້ວຍຄວາມນັບຖື

**ຢັ້ງຢືນ**
**ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້** **ຂະແໜງລ້ຽງສັດ ແລະ ການປະມົງ**

**ແບບພິມ ຂອຜ 5/Form IET 5**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

Lao People's Democratic Republic

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

Peace Independence Democracy Unity Prosperity

ກະຊວງກະສິກຳ ແລະ ປ່າໄມ້

Ministry of Agriculture and Forestry

ກົມລ້ຽງສັດ ແລະ ການປະມົງ

Department of Livestock and Fisheries

ເລກທີ/Ref. No:____________/ກລປ/DLF

ນະຄອນຫຼວງວຽງຈັນ, ວັນທີ/ Vientiane Capital, Date: ____________

# ໃບແຈ້ງອະນຸມັດ/NOTIFICATION LETTER

☐ນຳເຂົ້າ ☐ສົ່ງອອກ ☐ຂົນສົ່ງຜ່ານ ☐ນຳເຂົ້າເພື່ອສົ່ງອອກ ສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ

☐ IMPORT ☐ EXPORT ☐ IN TRANSIT ☐ IMPORT FOR RE-EXPORT OF ANIMALS/ AQUATICS/ANIMAL-FISHERIES COMMODITY

- ອີງຕາມກົດໝາຍວ່າດ້ວຍ ການລ້ຽງສັດ ແລະ ການສັດຕະວະແພດ ເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016/ Pursuant to the Law on the Livestock Production and Veterinary Matters, Ref.No. 08/NA, Dated 11 November 2016;
- ອີງຕາມກົດໝາຍວ່າດ້ວຍການປະມົງ ເລກທີ 03/ສພຊ ລົງວັນທີ 09 ກໍລະກົດ 2009/Pursuant to the Law on Fisheries, Ref.No. 03/NA, Dated 09 July 2009;
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມລ້ຽງສັດ ແລະ ການປະມົງ ເລກທີ 3824/ກປ ລົງວັນທີ 18 ສິງຫາ 2017/Pursuant to the Decision of Agriculture and Forestry Minister, Ref.No. 3824/MAF, Dated 18 August 2017;
- ອີງຕາມຄຳຮ້ອງສະບັບເລກທີ/ Refer to the request letter Ref. No.:............/.........ລົງວັນທີ/Date ..................................

ກົມລ້ຽງສັດ ແລະ ການປະມົງ ໄດ້ອອກໃບແຈ້ງອະນຸມັດນີ້ໃຫ້ທ່ານ/The Department of Livestock and Fisheries has issued this Notification Letter to /Mr./Ms....................................ສັນຊາດ/ Nationality.........................ອາຊີບ/Profession….................………… ຕາງໜ້າໃຫ້ບໍລິສັດ/Name of Company:.....................................ທີ່ຢູ່ຂອງບໍລິສັດ/Address: ໜ່ວຍ/Unit....... ບ້ານ/Village :.............................ເມືອງ/District: .............................ແຂວງ /Province...................................... ປະເທດ/Country: .................................................. ໂທລະສັບ/Telephone ........................................ອີເມລ/Email..................................................ດັ່ງມີລາຍການສິນຄ້າ ດັ່ງນີ້/ as Following Items:

| ລ/ດ<br>**Item** | ລາຍການສິນຄ້າ<br>**Description of goods** | ຫົວໜ່ວຍ<br>**Unit** | ຈຳນວນ<br>**Quantity** | ນ້ຳໜັກລວມ<br>Gross Weight | ມູນຄ່າລວມ<br>Amount |
|---|---|---|---|---|---|
| 1. | | | | | |
| 2. | | | | | |
| 3. | | | | | |
| 4. | | | | | |

– ຊື່ດ່ານ/Name of Checkpoint at.....................ສິ່ງທາງ/Means of Transportation .....................ຕາມເສັ້ນທາງ/Route Plan…………..

– ສະຖານທີ່ປາຍທາງຂອງສິນຄ້າ/Final destination: ຖະໜົນ/Street……......................……ບ້ານ/Village:..................................ເມືອງ/District: .............................ແຂວງ/Province..............................ປະເທດ/Country: …........……………ໂທລະສັບ/Tel No.............................

– ໃບແຈ້ງອະນຸມັດສະບັບນີ້ ໃຊ້ໄດ້………ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ/This Notification Letter is valid within........................days from the date of signature.

ດັ່ງນັ້ນ, ກົມລ້ຽງສັດ ແລະ ການປະມົງ ຈຶ່ງອອກໃບແຈ້ງ ອະນຸມັດສະບັບນີ້ ເພື່ອນຳໃຊ້ເປັນທາງການ ແລະ ຜູ້ທີ່ໄດ້ຮັບອະນຸມັດ ຕ້ອງປະຕິບັດຕາມກົດໝາຍແລະ ລະບຽບການຂອງ ສປປ ລາວ ຢ່າງເຂັ້ມງວດ/Therefore, DLF has issued this notification letter for official use and the authorized person stated above must be strictly followed law and regulation of the Lao PDR.

ອະນຸມັດໂດຍ/Approved by:

ຫົວໜ້າກົມລ້ຽງສັດ ແລະ ການປະມົງ/DG of DLF

แบบฟอร์ม ຂອຜ 6/Form IET 6

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

Lao People's Democratic Republic

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

Peace Independence Democracy Unity Prosperity

ກົມລ້ຽງສັດ ແລະ ການປະມົງ/

Department of Livestock and Fisheries

ຂະແໜງລ້ຽງສັດ ແລະ ການປະມົງ ນະຄອນຫຼວງ/ແຂວງ .............................

Provincial Livestock and Fisheries Section:........................... ເລກທີ/Ref no:............../...........

ດ່ານກວດກາສັດຕະວະແພດສາກົນ

International Animal Check Point at:.......................... ວັນທີ/Date:...........................

## ໃບຢັ້ງຢືນການກວດກາເອກະສານ/ Document Inspection Certification

☐ນຳເຂົ້າ (Import) ☐ສົ່ງອອກ (Export) ☐ນຳເຂົ້າເພື່ອສົ່ງອອກ (Import for Re-export) ☐ຂົນສົ່ງຜ່ານ (In Transit)

ສັດ, ສັດນ້ຳ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ

Animal, Aquatic Animal/Animal Products /Livestock and Fisheries related Commodity

ດ່ານກວດກາສັດຕະວະແພດສາກົນ/ International Animal Check Point (IAC)..............................ໄດ້ອອກ ໃບຢັ້ງຢືນການກວດການີ້ ໃຫ້ແກ່ບຸກຄົນ/ການຈັດຕັ້ງ/ຫຼືບໍລິສັດ ຊື່/Issues this Certification to Mr./Mrs./Ms.:............... ..........................ເບີໂທລະສັບ/Tel:........................ເລກທີໜັງສືເດີນທາງ/ID or Passport No:......................................ທີ່ຢູ່/Address, ບ້ານ/Village:...................., ເມືອງ/District:.................... ນະຄອນຫຼວງແຂວງ/ Province:……...... ............................... ຜົນຂອງການກວດກາເອກະສານ ມີດັ່ງນີ້/The Results of Inspection are as follow:

| | | | |
|---|---|---|---|
| – ໃບແຈ້ງອະນຸມັດການນຳເຂົ້າ (ຂອຜ 5) | ☐ຖືກຕ້ອງ | ☐ບໍ່ຖືກຕ້ອງ | ☐ ປະກອບເອກະສານຄືນໃໝ່/ |
| (Importation Notification) | ☐ Correct | ☐ Not correct | ☐ Reapply |
| – ໃບຢັ້ງຢືນສຸຂະພາບສັດ/ສັດນ້ຳ | ☐ຖືກຕ້ອງ | ☐ບໍ່ຖືກຕ້ອງ | ☐ປະກອບເອກະສານຄືນໃໝ່/ |
| (Animal Health Certificate) | ☐ Correct | ☐ Not correct | ☐ Require renew |
| – ໃບຢັ້ງຢືນສຸຂານາໄມຜະລິດຕະພັນສັດ/ສັດນ້ຳ | ☐ຖືກຕ້ອງ | ☐ບໍ່ຖືກຕ້ອງ | ☐ປະກອບເອກະສານຄືນໃໝ່/ |
| (Hygiene Certificate) | ☐ Correct | ☐ Not correct | ☐ Require renew |
| – ໃບຢັ້ງຢືນຄຸນນະພາບ | ☐ຖືກຕ້ອງ | ☐ບໍ່ຖືກຕ້ອງ | ☐ປະກອບເອກະສານຄືນໃໝ່/ |
| (Quality Certificate) | ☐ Correct | ☐ Not correct | ☐ Require renew |
| – ໃບຢັ້ງຢືນກຳມະພັນສັດ/ສັດນ້ຳ | ☐ຖືກຕ້ອງ | ☐ບໍ່ຖືກຕ້ອງ | ☐ປະກອບເອກະສານຄືນໃໝ່/ |
| (Pedigree Certificate) | ☐ Correct | ☐ Not correct | ☐ Require renew |

**ຄໍາເຫັນ/Comment:**.................................................................................................................

.................................................................................................................

.................................................................................................................

**ຢັ້ງຢືນໂດຍ/Certified by:**

**ຫົວໜ້າໜ່ວຍງານດ່ານກວດກາສັດຕະວະແພດສາກົນ/Chief of IAC**

**ລາຍເຊັນ/Signature:**

ແບບພິມ ຂອຜ 7/Form IET7

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
Lao People's Democratic Republic
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
Peace Independence Democracy Unity Prosperity

ກົມລ້ຽງສັດ ແລະ ການປະມົງ
Department of Livestock and Fisheries
ຂະແໜງລ້ຽງສັດ ແລະ ການປະມົງ ນະຄອນຫຼວງ/ແຂວງ........................
Provincial Livestock and Fisheries Section.........................................
ດ່ານກວດກາສັດຕະວະແພດສາກົນ
Veterinary International Check Point at ............................ ເລກທີ/Ref
no:................/..........

ວັນທີ/Date:..............................

# ໃບຢັ້ງຢືນການກວດກາ/ Inspection Certification

☐ນຳເຂົ້າ (Import) ☐ສົ່ງອອກ (Export) ☐ນຳເຂົ້າເພື່ອສົ່ງອອກ (Import for Re-Export) ☐ຂົນສົ່ງຜ່ານ (In Transit)
ສັດ, ສັດນ້ຳ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ
Of Animals, Aquatic animals/Animal products /Livestock and Fisheries related Commodity

ດ່ານກວດກາສັດຕະວະແພດສາກົນ/ International Animal Check Point (IAC)...........................ໄດ້ອອກໃບຢັ້ງຢືນການກວດກາໃຫ້ແກ່ບຸກຄົນ/ການຈັດຕັ້ງ/ຫຼື ບໍລິສັດ ຊື່/Issues this Certification to Mr /Mrs /Ms.: ...................................
ເບີໂທລະສັບ/Tel:................. ເລກທີໜັງສືເດີນທາງ/ID or Passport No:................ທີ່ຢູ່/Address, ບ້ານ/Village:...............
ເມືອງ/District:........................ນະຄອນຫຼວງ/ແຂວງ/Province:..........................ດັ່ງລາຍລະອຽດລຸ່ມນີ້/as following items:

| ລ/ດ Items | ລາຍການສິນຄ້າ Description of Goods | ຫົວໜ່ວຍ Unit | ຈຳນວນ Quantity | ນ້ຳໜັກລວມ (kg) Gross weight | ໝາຍເຫດ Remarks |
|---|---|---|---|---|---|
| 1 | | | | | |
| 2 | | | | | |
| 3 | | | | | |
| 4 | | | | | |
| ....... | | | | | |
| ລວມ | | | | | |

**ຜົນຂອງການກວດກາເອກະສານ ແລະ ການກວດກາທາງດ້ານສັດຕະວະແພດ/Veterinary inspection results**:

☐ຖືກຕ້ອງ ☐ບໍ່ຖືກຕ້ອງ ☐ປະກອບເອກະສານຄືນໃໝ່ ☐ ສົ່ງສິນຄ້າກັບຄືນຕົ້ນທາງ
☐Correct ☐Not correct ☐Reapply ☐ Reject and return the goods

**ຜົນຂອງການກວດກາຂອງຫ້ອງວິໄຈ ປະເທດຕົ້ນທາງ/Laboratory test result of Exporting country:**

☐ມີ/yes ☐ ບໍ່ມີ/none ☐ ເກັບຕົວຢ່າງສົ່ງເຂົ້າຫ້ອງວິໄຈສູນກາງ/Collect sample for testing

**ຄຳເຫັນ/Comments:**......................................................................................................................................

| ປະທັບກາ/Stamp | ລາຍເຊັນ ຫົວໜ້າດ່ານກວດກາສັດຕະວະແພດສາກົນ/ Name and Signature Chief of IAC | ຊື່ ແລະ ລາຍເຊັນເຈົ້າໜ້າທີ່ສັດຕະວະແພດຜູ້ກວດກາ/Name and signature of Veterinary Inspector |
|---|---|---|
| | ................................................ | ................................................ |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມລ້ຽງສັດ ແລະ ການປະມົງ
ຂະແໜງລ້ຽງສັດ ແລະ ການປະມົງນະຄອນຫຼວງ/ແຂວງ.....................
ດ່ານກວດກາສັດຕະວະແພດສາກົນ.................................    ທີ່..................., ວັນທີ..............

**ບົດບັນທຶກ**

**ການຕິດຕາມກວດກາການເຄື່ອນຍ້າຍ ສັດ, ສັດນ້ຳ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ ຫຼັງການນຳເຂົ້າ**

- ອີງຕາມກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016 ພາກທີ IX ໝວດທີ1 ມາດຕາ 103
- ອີງຕາມກົດໝາຍ ວ່າດ້ວຍການປະມົງ ເລກທີ 03/ສພຊ, ລົງວັນທີ 11 ກໍລະກົດ 2009.
- ອີງຕາມດຳລັດວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ, ສະບັບເລກທີ 230/ລບ, ລົງວັນທີ 04 ມິຖຸນາ 2012.

ໃນວັນທີ..............ເວລາ...........ໂມງ ໄດ້ມີຄະນະກວດກາ ຊຶ່ງປະກອບດ້ວຍ:

1. ທ່ານ:...................................................ຕຳແໜ່ງ.......................................................
2. ທ່ານ:...................................................ຕຳແໜ່ງ.......................................................
3. ທ່ານ:...................................................ຕຳແໜ່ງ.......................................................
4. ທ່ານ:...................................................ຕຳແໜ່ງ.......................................................

ໄດ້ລົງຕິດຕາມກວດກາການເຄື່ອນຍ້າຍຫຼັງການນຳເຂົ້າ ສັດ, ຜະລິດຕະພັນສັດ, ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ໂດຍ ຕາມ ໃບແຈ້ງອະນຸມັດນຳເຂົ້າ ເລກທີ/Ref. No:_____________/ກລປ/DLF, ລົງວັນທີ..............ແລະ ໃບຢັ້ງຢືນການກວດກາເລກທີ ............, ລົງວັນທີ..................ອອກໃຫ້ແກ່ທ່ານ............................... (ບຸກຄົນ/ການຈັດຕັ້ງ/ຫຼືບໍລິສັດ). ສະຖານທີ່ເອົາສິນຄ້າລົງປາຍທາງ ບ້ານ.......................... ເມືອງ......................ແຂວງ:............................ ໂທລະສັບ:............................

**ຜ່ານການລົງຕິດຕາມກວດກາຕົວຈິງ ເຫັນວ່າ:**

| | | | |
|---|---|---|---|
| 1. | ☐ ລົງຖືກຕ້ອງ | ☐ ລົງບໍ່ຖືກຕ້ອງ | ☐ ອື່ນໆ........................... |
| 2. | ☐ ມີລະບົບສາງຕາມລະບຽບເຕັກນິກ | ☐ ບໍ່ມີລະບົບສາງ | ☐ ອື່ນໆ........................... |
| 3. | ☐ ຄົບຕາມຈຳນວນ | ☐ ບໍ່ຄົບຕາມຈຳນວນ | ☐ ອື່ນໆ......................... |
| 4. | ☐ ມີຄອກກັກກັນສັດນຳເຂົ້າມາລ້ຽງໃໝ່ | ☐ ບໍ່ມີຄອກກັກກັນສັດນຳເຂົ້າມາລ້ຽງໃໝ່ | ☐ອື່ນໆ............................ |
| 5. | ☐ ມີໜັງສືຢັ້ງຢືນການຂ້າເຊື້ອ-ພັກຄອກ | ☐ ບໍ່ມີໜັງສືຢັ້ງຢືນການພັກຄອກ | ☐ ອື່ນໆ............................ |

**ຄຳແນະນຳທາງດ້ານວິຊາການ ຂອງຄະນະກວດກາຕົວຈິງມີດັ່ງນີ້:**

1. ☐ ໃຫ້ແຍກສັດຝູງສັດໃໝ່ ແລະ ເກົ່າອອກຈາກກັນ ໄລຍະເວລາ...........ວັນ ເພື່ອຕິດຕາມກວດກາ ຕາມລະບຽບວິຊາການ
2. ☐ ການເກັບຮັກສາຜະລິດຕະພັນສັດ, ຜະລິດຕະພັນສັດນ້ຳ, ຢາສຳຫຼັບສັດ ແລະ ອຸປະກອນສັດຕະວະແພດຕ້ອງໃຫ້ສະອາດ, ຖືກຕາມຫຼັກສຸຂານາໄມ ແລະ ເກັບໄວ້ອຸນຫະພູມທີ່ເໝາະສົມ
3. ☐ ໃນກໍລະນີພົບສັດຫຼືສັດນ້ຳ ເຈັບປ່ວຍຫຼືຕາຍ ຕ້ອງແຈ້ງໜ່ວຍງານລ້ຽງສັດ-ການປະມົງປະຈຳເມືອງ ເບີໂທລະສັບ..................
   ຫຼື ຂະແໜງລ້ຽງສັດ-ການປະມົງ ແຂວງ, ນະຄອນຫຼວງວຽງຈັນ ຫຼື ດ່ານກວດກາສັດຕະວະແພດ ເບີໂທລະສັບ...................
4. ☐ ໃນກໍລະນີຂົນສົ່ງສັດນ້ຳ, ນ້ຳ ແລະ ສິ່ງເສດເຫຼືອ ທີ່ນຳໃຊ້ຫຼັງການຂົນສົ່ງຕ້ອງທຳການບຳບັດຫຼືຂ້າເຊື້ອຕາມລະບຽບວິຊາການກຳນົດ.
5. ☐ ກ່ອນການນຳເຂົ້າຄັ້ງຕໍ່ໄປຕ້ອງສະຫຼຸບສັງລວມການນຳເຂົ້າທີ່ຜ່ານມາ ຄັດຕິດມາພ້ອມກັບແຜນທີ່ສະເໜີຂໍນຳເຂົ້າໃໝ່.
6. ☐ ໃຫ້ປະຕິບັດກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ປະຕິບັດຕາມຄຳແນະນຳນີ້ຢ່າງເຂັ້ມງວດ ຖ້າຖືເບົາຈະຖືກດຳເນີນຄະດີຕາມ ກໍລະນີເບົາຫຼືໜັກ ຕາມທີ່ກົດໝາຍກຳນົດ.

**ຄຳເຫັນຄະນະລົງກວດກາ:**

.................................................................................................................................................................
.................................................................................................................................................................
...............................................................................................................................................................

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນບ່ອນອີງ

| **ລາຍເຊັນຜູ້ບັນທຶກ** | **ລາຍເຊັນເຈົ້າຂອງສິນຄ້າ** |
|---|---|
| ......................................... | ......................................... |
| **ໜ່ວຍງານລ້ຽງສັດ-ການປະມົງເມືອງ** | **ດ່ານກວດກາສັດຕະວະແພດສາກົນ** |
| ............................................. | ............................................. |

ແບບພິມ ຂອຟ 9/Form IET9

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງ/ແຂວງ.......................
ເມືອງ.......................................
ຫ້ອງການກະສິກຳ ແລະ ປ່າໄມ້
ໜ່ວຍງານລ້ຽງສັດ ແລະ ການປະມົງ

ນະຄອນຫຼວງວຽງຈັນ, ວັນທີ...................

# ບົດບັນທຶກ

## ການລົງຕິດຕາມກວດກາສຸຂະພາບ ສັດ ສັດນ້ຳ ໄລຍະກັກກັນ

- ອີງຕາມກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ, ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016 ພາກທີ III ໝວດທີ 3 ມາດຕາ 51
- ອີງຕາມດຳລັດຂອງລັດຖະບານ ວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ສະບັບເລກທີ 230/ລບ, ລົງວັນທີ 04 ມິຖຸນາ 2014.
- ບົດບັນທຶກ ການຕິດຕາມກວດກາການເຄື່ອນຍ້າຍ ສັດ, ສັດນ້ຳ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ ຫຼັງການນຳເຂົ້າ ລົງວັນທີ....................................

ໃນວັນທີ............................ພະນັກງານໜ່ວຍງານລ້ຽງສັດ-ການປະມົງເມືອງ........................ໄດ້ລົງສົມທົບກັບເຈົ້າຂອງຟາມລ້ຽງສັດຊື່.................................. .. ເບີໂທລະສັບ.........................ທີ່ຕັ້ງຟາມຢູ່ບ້ານ..........................ເມືອງ..........................ເພື່ອດຳເນີນການຕິດຕາມກວດກາສຸຂະພາບສັດ/ສັດນ້ຳ ໄລຍະກັກກັນ...........ວັນ ໂດຍມີລາຍລະອຽດດັ່ງລຸ່ມນີ້:

1. ວັນ ເດືອນ ປີ ນຳເຂົ້າສັດ ຕິດຕາມກັກກັນ:.........................., ສະຖານະພາບສັດໃນເບື້ອງຕົ້ນ:.................................ວັນ ເດືອນ ປີ ຄົບກຳນົດ ກັກກັນ.......................
2. ຊື່ບໍລິສັດ ຫຼື ເຈົ້າຂອງສັດ:...............................ທີ່ຢູ່ບ້ານ:........................ເມືອງ:..........................ແຂວງ:............................ເບີໂທລະສັບ:.........................
3. ຊະນິດສັດ: ...................., ສາຍພັນ:.....................ຈຳນວນ..................ໂຕ, ຜູ້.................ໂຕ, ແມ່.....................ໂຕ, ສ່ວນສາເຫດໃນການກັກກັນ ເພື່ອຕິດຕາມ ກວດກາສຸຂະພາບສັດ ເຊິ່ງມີການບໍລິການ ແລະ ການກວດກາສຸຂະພາບສັດດັ່ງນີ້:

| ລ/ດ | ວັນທີ............... ເຖິງ................. | ໝາຍເລກປະຈຳໂຕສັດ | ເພດ | ອາຍຸ | ອຸນຫະພູມ ອີງສາເຊ C° | ລະດັບ pH ອົກຊີແຊນ $O_2$ | ຕິດຕາມອາການພາຍນອກ | ການໃຫ້ນ້ຳ-ອາຫານ | ການປິ່ນປົວສັດເຈັບ | ກຳຈັດພະຍາດກາຝາກພາຍໃນ-ນອກ | ສັກຢາກັນພະຍາດສັດ | ເກັບຕົວສິ່ງ | ຜົນຂອງການຕິດຕາມ |
|---|---|---|---|---|---|---|---|---|---|---|---|---|---|
| 1 | | | | | | | | | | | | | |

| | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| 2 | | | | | | | | | | | | | |
| 3 | | | | | | | | | | | | | |
| 4 | | | | | | | | | | | | | |
| 5 | | | | | | | | | | | | | |
| 6 | | | | | | | | | | | | | |
| 7 | | | | | | | | | | | | | |
| 8 | | | | | | | | | | | | | |
| 9 | | | | | | | | | | | | | |
| 10 | | | | | | | | | | | | | |
| ....... | | | | | | | | | | | | | |

ຜ່ານການຈັດຕັ້ງປະຕິບັດການກັກກັນສັດ ໃນໄລຍະ.............ວັນ (ວັນທີ:.......................ຫາ.......................) ເຫັນວ່າສັດຈຳນວນດັ່ງກ່າວບໍ່ໄດ້ສະແດງອາການຂອງ ພະຍາດສັດ ຫຼື ສັດນ້ຳ ທີ່ຈຳເປັນຕ້ອງແຈ້ງ...........................................................................................................................................................

**ໜ່ວຍງານລ້ຽງສັດ ແລະ ການປະມົງ ປະຈຳເມືອງ** **ເຈົ້າຂອງຟາມ** **ພະນັກງານຜູ້ບັນທຶກ**

แบบพิม ຂອຜ 10/Form IET10

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງ/ແຂວງ........................

ເມືອງ.........................................

ຫ້ອງການກະສິກຳ ແລະ ປ່າໄມ້ ເລກທີ:............../ຫກປ.........

ທີ:...................... ວັນທີ..................

# <u>ໃບຢັ້ງຢືນສຸຂະພາບສັດ ຫຼື ສັດນ້ຳ (ໄລຍະກັກກັນ.......ວັນ)</u>

- ອີງຕາມກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ), ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016 ພາກທີ III ໝວດທີ 3 ມາດຕາ 51
- ອີງຕາມດຳລັດຂອງລັດຖະບານ ວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ສະບັບເລກທີ 230/ລບ, ລົງວັນທີ 04 ມິຖຸນາ 2012.
- ອີງຕາມບົດບັນທຶກການລົງຕິດຕາມສຸຂະພາບສັດໃນໄລຍະກັກກັນ........ວັນ ຄັ້ງວັນທີ..........................

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ............................ໄດ້ອອກໃບຢັ້ງຢືນສຸຂະພາບສັດ ຫຼື ສັດນ້ຳ ໃນໄລຍະກັກກັນ..........ວັນ, ໃຫ້ແກ່ຟາມ:..........................ທີ່ຕັ້ງຢູ່ບ້ານ:.....................ເມືອງ:...........................ເບີໂທລະສັບ................................ຜ່ານການລົງຕິດຕາມກວດກາສຸຂະພາບສັດ ຂອງໜ່ວຍງານລ້ຽງສັດ ແລະ ການປະມົງປະຈຳເມືອງ ໃນໄລຍະເວລາ.....ວັນ ແຕ່ວັນທີ........................ເຫັນວ່າສັດຈຳນວນດັ່ງກ່າວມີສຸຂະພາບແຂງແຮງດີ ແລະ ບໍ່ສະແດງອາການຕິດເຊື້ອຂອງພະຍາດສັດຫຼືສັດນ້ຳທີ່ຈຳເປັນຕ້ອງແຈ້ງ ສ່ວນລາຍລະອຽດມີບົດບັນທຶກ"ຂອຜ 9" ຄັດຕິດມາພ້ອມນີ້.

ດັ່ງນັ້ນ, ຈິ່ງອອກໃບຢັ້ງຢືນນີ້ ເພື່ອເປັນຫຼັກຖານໃຫ້ແກ່ພາກສ່ວນກ່ຽວຂ້ອງ.

**ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ**